# Mekong River Commission

P.O. Box 6101, Vientiane 01000, Lao PDR
Telephone: (856-21) 263 263   Facsimile: (856-21) 263 264
Email: mrcs@mrcmekong.org  Website: www.mrcmekong.org


## *ບົດຖະແຫລງຂ່າວ*

MRC No.15/08

# *ການຮ່ວມມືລະຫວ່າງຄະນະກຳມາທິການແມ່ນ້ຳຂອງ ແລະ ສ ປ ຈີນໄດ້ ການສືບຕໍ່ໃນກອງປະຊຸມແມ່ນ້ຳຂອງໃນລະດັບພາກພື້ນ*

**ນະຄອນຫລວງວຽງຈັນ, ສ ປ ປ ລາວ**
**29 ສິງຫາ 2008**

ການເພີ່ມທະວີການຮ່ວມມືໃນລະດັບພາກພື້ນທາງດ້ານຊັບພະຍາກອນແຫລ່ງນ້ຳ ໄດ້ກາຍເປັນຫົວຂໍ້ລວມຂອງການປຶກສາຫາລືລະຫວ່າງບັນດາປະເທດສະມາຊິກຄະນະກຳມາທິການແມ່ນ້ຳຂອງ ກຳປູເຈັຍ, ລາວ, ໄທ ແລະ ຫວຽດນາມ ແລະ ຜູ້ຕາງໜ້າຈາກສອງປະເທດແມ່ນ້ຳຂອງຕອນເທິງ, ສ ປ ຈີນ ແລະ ພະມ້າ, ໃນກອງປະຊຸມເຈລະຈາ ຄັ້ງທີ 13 ທີ່ຈັດຂຶ້ນຢູ່ນະຄອນຫລວງວຽງຈັນ, ສ ປ ປ ລາວ. ກອງປະຊຸມດັ່ງກ່າວໄດ້ບັນລຸເຖິງການຕໍ່ສັນຍາລະຫວ່າງ ຄະນະກຳມາທິການແມ່ນ້ຳຂອງ ແລະ ສ ປ ຈີນ ໂດຍ ສ ປ ຈີນ ຈະສືບຕໍ່ແລກປ່ຽນຂໍ້ມູນທາງດ້ານອຸທົກກະສາດ ຈາກສອງສະຖານີ ເກັບກຳຂໍ້ມູນ ທີ່ຕັ້ງຢູ່ແມ່ນ້ຳລ້ານຊ້າງ/ແມ່ນ້ຳຂອງ ໃນແຂວງຢຸນນານຂອງ ສ ປ ຈີນ.

ກອງປະຊຸມເຈລະຈາ ລະຫວ່າງຄະນະກຳມາທິການແມ່ນ້ຳຂອງ ແລະ ບັນດາປະເທດຄູ່ເຈລະຈາ, ສ ປ ຈີນ ແລະ ພະມ້າ, ໄດ້ຈັດຂຶ້ນທຸກໆປີ ເພື່ອປຶກສາຫາລືການເພີ່ມທະວີການຮ່ວມມືໃນອ່າງແມ່ນ້ຳຂອງ. ນອກຈາກທີ່ໄດ້ມີການຕົກລົງກັນທາງດ້ານການແລກປ່ຽນຂໍ້ມູນອຸທົກກະສາດແລ້ວ, ກອງປະຊຸມຍັງໄດ້ໃຫ້ຄວາມສຳຄັນຫລາຍໃນການຮ່ວມມືກັນລະຫວ່າງຄະນະກຳມາທິການແມ່ນ້ຳຂອງ ແລະ ສ ປ ຈີນ ເພື່ອຮັບປະກັນວ່າແຜນການພັດທະນາໄຟຟ້ານ້ຳຕົກທັງໝົດຈະພິຈາລະນາເອົາວຽກງານການຂົນສົ່ງທາງນ້ຳໄປພ້ອມໆກັນ. ສຳນັກງານຄຸ້ມຄອງກິດຈະການເດີນເຮືອຂອງແຂວງຢຸນນານ ແລະ ແຜນງານການເດີນເຮືອຂອງຄະນະກຳມາທິການແມ່ນ້ຳຂອງ ໄດ້ພິຈາລະນາຄວາມເປັນໄປໄດ້ໃນການສຶກສາສະພາບແລວນ້ຳຂອງແມ່ນ້ຳຂອງທີ່ເປັນອັນຕະລາຍໃນການເດີນເຮືອຊ່ວງລະຫວ່າງຫ້ວຍຊາຍເຖິງຫລວງພະບາງ ໃນ ສ ປ ປ ລາວ. ການອອກແບບແລວນ້ຳ ແລະເຮັດເຄື່ອງໝາຍການເດີນເຮືອຢ່າງລະອຽດແມ່ນມີຄວາມຈຳເປັນຫລາຍໃນເຂດດັ່ງກ່າວທີ່ເປັນປັດໃຈສຳຄັນຂອງການພັດທະນາທ່ອງທ່ຽວຕາມລຳນ້ຳຂອງລະຫວ່າງຊຽງລາຍຫາຫລວງພະບາງ.

ໜ່ວຍງານຮັບຜິດຊອບຂອງ ສ ປ ຈີນ ແລະ ຄະນະກຳມາທິການແມ່ນ້ຳຂອງໄດ້ຮ່ວມກັນກະກຽມ ຈັດກອງປະຊຸມຄັ້ງທຳອິດກ່ຽວກັບຄວາມປອດໄພໃນການເດີນເຮືອ. ກອງປະຊຸມທີ່ຈະຈັດຂຶ້ນຢູ່ແຂວງຢຸນນານໃນເດືອນຕຸລາປີນີ້

ຈະເປັນການເຕົ້າໂຮມກັນຂອງນັກວິຊາການທາງດ້ານການເດີນເຮືອເພື່ອປຶກສາຫາລື ກ່ຽວກັບຄວາມປອດໄພຂອງການເດີນເຮືອ. ເປົ້າໝາຍໄລຍະຍາວແມ່ນຮ່ວມກັນເພື່ອຊ່ວຍຫລຸດຜ່ອນອຸບັດເຫດຈາກການເດີນເຮືອ, ເພີ່ມຄວາມຮູ້ດ້ານຄວາມສຳຄັນຂອງສິ່ງແວດລ້ອມ ແລະ ນິເວດວິທະຍາຂອງແມ່ນ້ຳ ພາຍໃຕ້ກອບການຂົນສົ່ງທາງນ້ຳ.

ຄະນະກຳມາທິການແມ່ນ້ຳຂອງກຳລັງກະກຽມເພື່ອດຳເນີນການສຶກສາຊຶ່ງຈະໄດ້ແຈ້ງລາຍລະອຽດໃຫ້ບັນດາປະເທດສະມາຊິກຄະນະກຳມາທິການແມ່ນ້ຳຂອງ ແລະ ບັນດາປະເທດຄູ່ເຈລະຈາຮັບຊາບກ່ຽວກັບຄວາມປອດໄພໃນການເດີນເຮືອ. ບັນດາການສຶກສາດັ່ງກ່າວຈະຮວມເອົາການວິເຄາະທາງດ້ານເສດຖະກິດຂອງການຂົນສົ່ງທາງນ້ຳໃນແມ່ນ້ຳຂອງຕອນເທິງ, ບົດຮຽນທີ່ດີກ່ຽວກັບຄວາມປອດໄພໃນການເດີນເຮືອຂອງສາກົນ ແລະ ມີບົດແນະນຳຕ່າງໆ ສຳລັບປະຕູເດີນເຮືອທີ່ກ່ຽວຂ້ອງໃນການພັດທະນາໄຟຟ້ານ້ຳຕົກ. ການສຶກສານີ້ຈະພື້ນຖານໃນການກະກຽມບົດແນະນຳເພື່ອໃຊ້ໃນການວາງແຜນ, ການອອກແບບ, ການກໍ່ສ້າງ ແລະ ການບໍລິຫານປະຕູເດີນເຮືອຜ່ານເຂື່ອນຊຶ່ງຈະເຮັດໃຫ້ຄະນະກຳມາທິການແມ່ນ້ຳຂອງສາມາດໃຫ້ຄຳແນະນຳແກ່ບັນດາລັດຖະບານຕ່າງໆ ແລະ ພາກສ່ວນເອກະຊົນກ່ຽວກັບການປະຕິບັດ ແລະ ນຳໃຊ້ການສຳລັບເຮືອທີ່ເປັນເອກະພາບໃນການພັດທະນາເຂື່ອນໄຟ້ານ້ຳຕົກຕ່າງໆ.

ສ ປ ຈີນໄດ້ນຳສະເໜີໃຫ້ກອງປະຊຸມຊາບກ່ຽວກັບຂໍ້ມູນຂ່າວສານເຕັກນິກກ່ຽວກັບບັນດາໂຄງການໄຟຟ້າ ທີ່ມີແລ້ວແລະນອນໃນແຜນກໍ່ສ້າງຢູ່ຕາມລຳແມ່ນ້ຳລ້ານຊ້າງ/ແມ່ນ້ຳຂອງຕອນເທິງຂອງ ສ ປ ຈີນ.

ໂດຍຕາງໜ້າໃຫ້ປະທານຄະນະກຳມະການຮ່ວມຄະນະກຳມາທິການແມ່ນ້ຳຂອງ ທ່ານ ທະເນດ ດາວະສຸວັນ, ຮອງເລຂາທິການ ກົມຊັບພະຍາກອນນ້ຳຂອງໄທ ໄດ້ກ່າວວ່າການປຶກສາຫາລືແບບເປີດເຜີຍ ແລະ ສ້າງສັນຂອງກອງປະຊຸມຄັ້ງນີ້ມີຄວາມສຳຄັນຫລາຍໃນວຽກງານການພັດທະນາແບບຍືນຍົງໃນບັນດາປະເທດພາຄີແມ່ນ້ຳຂອງ. ທ່ານ ທະເນດກ່າວຕື່ມອີກວ່າ "ຕໍ່ບັນຫາດັ່ງກ່າວ, ຄະນະກຳມາທິການແມ່ນ້ຳຂອງມີຄວາມຍິນດີໃນການສືບຕໍ່ພົວພັນ ແລະ ປຶກສາຫາລືກັບ ສ ປ ຈີນ ແລະ ພະມ້າ".


- **ລາຍລະອຽດເພີ່ມເຕີມ ກະລຸນາຕິດຕໍ່ ທ່ານ ເອເດັນ ເກຣນເດນນິງ, ພະນັກງານຮັບຜິດຊອບຕິດຕໍ່ພົວພັນ**

  ໂທ: 856 21 263 263 Ext 4703, ມືຖື: (856) 20 559 9139 ແຟກ: (85621) 263 264

  ອີເມວ: aiden@mrcmekong.org